**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການຕ່າງປະເທດ | ເລກທີ 1861 /ຕປທ.ສພກ

ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19

ນະຄອນຫຼວງວຽງຈັນ, ວັນທີ 31 ກໍລະກົດ 2020

# ຄໍາແນະນໍາ

## ກ່ຽວກັບຂັ້ນຕອນລະອຽດໃນການປະກອບເອກະສານຂໍອະນຸຍາດ ເຂົ້າ-ອອກ ສປປ ລາວ

- ອີງຕາມຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດອັບເສບປອດຈາກເຊື້ອຈຸລະໂຣກສາຍພັນໃໝ່ ສະບັບເລກທີ 09/ນຍ, ລົງວັນທີ 03 ກຸມພາ 2020;
- ອີງຕາມແຈ້ງການ ວ່າດ້ວຍການສືບຕໍ່ປະຕິບັດບັນດາມາດຕະການໃນການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ສະບັບເລກທີ 806/ຫສນຍ, ລົງວັນທີ 29 ກໍລະກົດ 2020;
- ອີງຕາມຄໍາແນະນໍາ ຂອງຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດອັກເສບປອດສາຍພັນໃໝ່ (COVID-19) ສະບັບເລກທີ 2336 /ສພກ, ລົງວັນທີ 31 ກໍລະກົດ 2020.

ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຂອງກະຊວງການຕ່າງປະເທດ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ເນື່ອງຈາກວ່າ ລັດຖະບານລາວ ຍັງສືບຕໍ່ປິດດ່ານຊາຍແດນທາງບົກ ແລະ ທາງອາກາດ ໃນຂອບເຂດທົ່ວປະເທດ ເພື່ອປ້ອງກັນ ແລະ ສະກັດກັ້ນການລະບາດ ຂອງພະຍາດ COVID-19 ຢູ່ ສປປ ລາວ, ດັ່ງນັ້ນ, ບຸກຄົນ ຫຼື ນິຕິບຸກຄົນໃດ ທີ່ມີຈຸດປະສົງຈະເດີນທາງເຂົ້າ-ອອກ ສປປ ລາວ ຈະຕ້ອງໄດ້ປະຕິບັດຕາມຂັ້ນຕອນ ແລະ ມາດຕະການ ດັ່ງລຸ່ມນີ້:

### I. ການສະເໜີຂໍອະນຸຍາດເຂົ້າ ສປປ ລາວ

#### 1. ກ່ອນຈະເດີນທາງເຂົ້າ ສປປ ລາວ

1.1 ກະຊວງ ແລະ ອົງການທຽບເທົ່າ ທີ່ມີຄວາມຈໍາເປັນອັນຮີບດ່ວນຮັບເອົາຊ່ຽວຊານ, ວິຊາການ, ອາສາສະໝັກ ແລະ ນັກສຶກສາຕ່າງປະເທດ ໃຫ້ສະເໜີເປັນລາຍລັກອັກສອນເຖິງ ຄະນະສະເພາະກິດກະຊວງການຕ່າງປະເທດ ໂດຍຜ່ານຂະແໜງການທີ່ກ່ຽວຂ້ອງ ເພື່ອພິຈາລະນາອະນຸມັດ (ສະຖານທີ່ປະຈໍາການ ຢູ່ ກົມກົງສຸນ, ກະຊວງການຕ່າງປະເທດ);

1.2 ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຄວາມຈໍາເປັນຈະເອົານັກລົງທຶນ ແລະ ນັກທຸລະກິດ ເຂົ້າ ສປປ ລາວ ເພື່ອດໍາເນີນການສຶກສາການລົງທຶນ, ເຊັນສັນຍາ ຫຼື ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ຕ້ອງດໍາເນີນຕາມຂັ້ນຕອນຂອງຂະແໜງການທີ່ກ່ຽວຂ້ອງ ກ່ອນຈະສະເໜີເປັນລາຍລັກອັກສອນເຖິງ ຄະນະສະເພາະກິດກະຊວງການຕ່າງປະເທດ, ເອກະສານປະກອບມີ:

1) ໃບອະນຸຍາດລົງທຶນພາຍໃນ ແລະ ຕ່າງປະເທດ;

2) ໃບທະບຽນວິສາຫະກິດ;

3) ໃບຢັ້ງຢືນການມອບພັນທະອາກອນປະຈຳປີ;

4) ໃບສະເໜີຂອງກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ຫຼື ພະແນກ ແຜນການ ແລະ ການລົງທຶນ ຂອງແຂວງ/ນະຄອນຫຼວງ ເຖິງກົມກົງສຸນ, ກະຊວງການຕ່າງປະເທດ ເພື່ອຂໍວີຊາ ເຂົ້າ ສປປ ລາວ ໂດຍຜ່ານກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ, ກະຊວງປ້ອງກັນ ຄວາມສະຫງົບ;

5) ໜັງສືສະເໜີເຖິງ ຄະນະສະເພາະກິດກະຊວງການຕ່າງປະເທດ ຕ້ອງລະບຸລາຍລະອຽດກ່ຽວກັບລາຍ ຊື່, ຄາດຄະເນວັນເວລາການເດີນທາງ, ດ່ານທີ່ຈະເດີນທາງເຂົ້າ, ພາຫະນະໃນການເດີນທາງ, ສະຖານທີ່ຈະເຂົ້າຈຳກັດບໍລິເວນ, ປະເທດທີ່ຈະເດີນທາງຜ່ານ ແລະ ເຫດຜົນຄວາມຈຳເປັນຮີບ ດ່ວນຂອງການເດີນທາງເຂົ້າ ສປປ ລາວ;

6) ໃບຢັ້ງຢືນການຈອງໂຮງແຮມ ທີ່ຄະນະສະເພາະກິດສູນກາງ ແລະ ທ້ອງຖິ່ນ ກຳນົດໄວ້.

1.3 ບໍລິສັດ ຫຼື ເຈົ້າຂອງໂຄງການຢູ່ ສປປ ລາວ ທີ່ມີຄວາມຈຳເປັນອັນຮີບດ່ວນນຳເຂົ້າແຮງງານ ແລະ ວິຊາ ການຕ່າງປະເທດ ເພື່ອຮັບໃຊ້ບັນດາກິດຈະການ ແລະ ໂຄງການ, ຕ້ອງດຳເນີນຕາມຂັ້ນຕອນຂອງຂະ ແໜງການທີ່ກ່ຽວຂ້ອງ ກ່ອນຈະສະເໜີເປັນລາຍລັກອັກສອນເຖິງ ຄະນະສະເພາະກິດ ກະຊວງການຕ່າງ ປະເທດ ເອກະສານປະກອບມີ:

1) ໃບອະນຸຍາດລົງທຶນ ຢູ່ ສປປ ລາວ;

2) ໃບທະບຽນວິສາຫະກິດ;

3) ໃບຢັ້ງຢືນການມອບພັນທະອາກອນປະຈຳປີ;

4) ໃບອະນຸຍາດໂກຕານຳໃຊ້ແຮງງານຕ່າງປະເທດ ຈາກກະຊວງແຮງງານ ແລະ ສະຫວັດດີການ ສັງຄົມ;

5) ໃບອະນຸຍາດນຳເຂົ້າແຮງງານຕ່າງປະເທດ ຈາກພະແນກແຮງງານນະຄອນຫຼວງ/ແຂວງ;

6) ໃບສະເໜີຈາກຜູ້ປະກອບການ ເຖິງກົມກົງສຸນ, ກະຊວງການຕ່າງປະເທດ ເພື່ອຂໍວີຊາເຂົ້າ ສປປ ລາວ ໂດຍຜ່ານກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ, ກະຊວງປ້ອງກັນຄວາມສະຫງົບ;

7) ໜັງສືສະເໜີເຖິງ ຄະນະສະເພາະກິດກະຊວງການຕ່າງປະເທດ ຕ້ອງລະບຸລາຍລະອຽດກ່ຽວກັບ ລາຍຊື່, ຄາດຄະເນວັນເວລາການເດີນທາງ, ພາຫະນະໃນການເດີນທາງ, ດ່ານທີ່ຈະເດີນທາງເຂົ້າ, ສະຖານທີ່ຈະເຂົ້າຈຳກັດບໍລິເວນ, ປະເທດທີ່ຈະເດີນທາງຜ່ານ ແລະ ເຫດຜົນຄວາມຈຳເປັນຮີບ ດ່ວນຂອງການເດີນທາງເຂົ້າ ສປປ ລາວ;

8) ໃບຢັ້ງຢືນການຈອງສະຖານທີ່ຈຳກັດບໍລິເວນ: ໂຮງແຮມ ຫຼື ສະຖານທີ່ສະເພາະ ທີ່ໄດ້ຮັບອະນຸຍາດ ຈາກຄະນະສະເພາະກິດສູນກາງ ແລະ ທ້ອງຖິ່ນ.

1.4 ສໍາລັບພົນລະເມືອງລາວ ທີ່ມີຈຸດປະສົງຢາກເດີນທາງກັບ ສປປ ລາວ ໃຫ້ລົງທະບຽນຢູ່ສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນໃຫຍ່ ແຫ່ງ ສປປ ລາວ ຢູ່ປະເທດທີ່ຕົນອາໃສຢູ່ ໂດຍແຈ້ງຂໍ້ມູນລະອຽດຂອງບຸກຄົນ, ຊື່ ແລະ ເບີໂທລະສັບຜູ້ຕິດຕໍ່ປະສານງານຢູ່ ສປປ ລາວ, ສາເຫດການຕົກຄ້າງ, ຄາດຄະເນວັນເວລາການເດີນທາງ, ພາຫະນະໃນການເດີນທາງ, ດ່ານທີ່ຈະເດີນທາງເຂົ້າ, ສະຖານທີ່ຈະເຂົ້າຈໍາກັດບໍລິເວນ (ໂຮງແຮມ ຫຼື ສູນຈໍາກັດບໍລິເວນ ຕາມການກໍານົດຂອງຄະນະສະເພາະກິດສູນກາງ ແລະ ທ້ອງຖິ່ນ) ເພື່ອຄະນະສະເພາະກິດ ຄົ້ນຄວ້າພິຈາລະນາຊອກຫາຊ່ອງທາງໃນການອໍານວຍຄວາມສະດວກໃນການເດີນທາງກັບ ສປປ ລາວ;

1.5 ສໍານັກງານຜູ້ຕາງໜ້າການທູດ, ອົງການຈັດຕັ້ງສາກົນຕ່າງໆ ທີ່ມີຄວາມຈໍາເປັນອັນຮີບດ່ວນຮັບເອົານັກການທູດ ແລະ ພະນັກງານ ເຂົ້າມາປະຕິບັດໜ້າທີ່ທັງໄລຍະສັ້ນ ແລະ ໄລຍະຍາວ ຢູ່ ສປປ ລາວ ໃຫ້ສະເໜີເປັນລາຍລັກອັກສອນ ເຖິງກົມກ່ຽວຂ້ອງ ຂອງກະຊວງການຕ່າງປະເທດ ໂດຍລະບຸລາຍລະອຽດ ເຊັ່ນ: ຊື່ ແລະ ນາມສະກຸນ, ຄາດຄະເນວັນເວລາການເດີນທາງ, ພາຫະນະໃນການເດີນທາງ, ດ່ານທີ່ຈະເດີນທາງເຂົ້າ, ທີ່ຢູ່ຈະເຂົ້າຈໍາກັດບໍລິເວນ ແລະ ປະເທດທີ່ຈະເດີນທາງຜ່ານ, ຫຼັງຈາກນັ້ນ ກົມກົງສຸນ, ກະຊວງການຕ່າງປະເທດ ຈະພິຈາລະນາໄປຕາມລະບຽບການ ແລະ ຂັ້ນຕອນພາຍໃນ ຂອງ ສປປ ລາວ;

1.6 ທຸກການສະເໜີເຂົ້າ ສປປ ລາວ ຕ້ອງສົ່ງ ເຖິງຄະນະສະເພາະກິດກະຊວງການຕ່າງປະເທດ ລ່ວງໜ້າຢ່າງໜ້ອຍ 07 ວັນລັດຖະການ ກ່ອນມື້ຈະເດີນທາງເຂົ້າ ສປປ ລາວ.

2. **ພາຍຫຼັງໄດ້ຮັບອະນຸຍາດຈາກ ຄະນະສະເພາະກິດກະຊວງການຕ່າງປະເທດ ໃຫ້ເຂົ້າ ສປປ ລາວ ແລ້ວຕ້ອງປະຕິບັດດັ່ງນີ້:**

2.1 ບຸກຄົນທີ່ມີວິຊາ ທີ່ຍັງມີອາຍຸນໍາໃຊ້ ແມ່ນສາມາດເດີນທາງເຂົ້າມາ ສປປ ລາວ ໄດ້ (ແຕ່ຕ້ອງໄດ້ຮັບການອະນຸຍາດຈາກ ຄະນະສະເພາະກິດກະຊວງການຕ່າງປະເທດກ່ອນ);

2.2 ສໍາລັບບຸກຄົນທີ່ຍັງບໍ່ທັນມີວິຊາເຂົ້າ ສປປ ລາວ, ພາຍຫຼັງທີ່ໄດ້ຮັບອະນຸຍາດປະເພດວິຊາ ຈາກກົມກົງສຸນກະຊວງການຕ່າງປະເທດ ຈຶ່ງສາມາດຍື່ນຂໍວິຊາທີ່ສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນໃຫຍ່ແຫ່ງ ສປປ ລາວ ຢູ່ປະເທດຕົ້ນທາງ.

## II. ການສະເໜີຂໍອະນຸຍາດອອກຈາກ ສປປ ລາວ

1. ສໍາລັບພົນລະເມືອງລາວ ທີ່ມີຄວາມຈໍາເປັນຮີບດ່ວນເດີນທາງໄປຕ່າງປະເທດ ຕ້ອງໄດ້ຮັບອະນຸຍາດຈາກອົງການຈັດຕັ້ງທີ່ຕົນສັງກັດ ແລ້ວສະເໜີໄປຍັງຄະນະສະເພາະກິດກະຊວງການຕ່າງປະເທດ ເພື່ອອໍານວຍຄວາມສະດວກໃນການເດີນທາງ ແຕ່ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງປະເທດປາຍທາງ;

2. ສໍາລັບພົນລະເມືອງລາວ ແລະ ຄົນຕ່າງປະເທດ ທີ່ເຈັບໜັກ ແລະ ຜູ້ທີ່ໄດ້ມີການປິ່ນປົວເປັນປະຈໍາ (ພະຍາດຮ້າຍແຮງທີ່ບໍ່ສາມາດປິ່ນປົວຢູ່ ສປປ ລາວ) ທີ່ມີຄວາມຈໍາເປັນຮີບດ່ວນຕ້ອງໄດ້ເດີນທາງໄປປິ່ນປົວຢູ່ຕ່າງປະເທດ ຕ້ອງມີໃບນໍາສົ່ງຈາກໂຮງໝໍລັດ ຫຼື ມີໃບນັດຈາກໂຮງໝໍປາຍທາງ ແລະ ຕ້ອງໄດ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງປະເທດປາຍທາງ;

3. ສໍາລັບພົນລະເມືອງຕ່າງປະເທດ ທີ່ມີຈຸດປະສົງເດີນທາງອອກຈາກ ສປປ ລາວ ຕ້ອງໄດ້ສະເໜີຜ່ານສະຖານເອກອັກຄະລັດຖະທູດຂອງປະເທດຕົນປະຈໍາ ສປປລາວ ແລະ ຕ້ອງໄດ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວ ຂ້ອງຂອງປະເທດປາຍທາງ; ສະຖານເອກອັກຄະລັດຖະທູດທີ່ກ່ຽວຂ້ອງ ຕ້ອງເຮັດໜັງ

ສືສະເໜີມາຍັງກະຊວງການຕ່າງປະເທດ ພ້ອມແຈ້ງລາຍຊື່, ເລກທີໜັງສືຜ່ານແດນ, ຄາດຄະເນວັນເວລາການເດີນທາງ, ດ່ານທີ່ຈະເດີນທາງອອກ, ພາຫະນະໃນການເດີນທາງ ເພື່ອພິຈາລະນາອຳນວຍຄວາມສະດວກ.

**ໝາຍເຫດ:**

1. ຄຳແນະນຳລະອຽດກ່ຽວກັບມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນການເດີນທາງເຂົ້າ-ອອກ ສປປ ລາວ ໃຫ້ປະຕິບັດຕາມ ຄຳແນະນຳຂອງ ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດອັກເສບປອດສາຍພັນໃໝ່ (COVID-19) 2336 /ສພກ, ລົງວັນທີ 31 ກໍລະກົດ 2020 ສາມາດເຂົ້າເບິ່ງໄດ້ໃນເວັບໄຊ https://www.covid19.gov.la/index.php.
2. ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີຄຳແນະນຳສະບັບໃໝ່ມາປ່ຽນແທນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດ ຢ່າງເຂັ້ມງວດດ້ວຍ.

ຮອງລັດຖະມົນຕີ
ຄະນະສະເພາະກິດຂັ້ນສູນກາງ
ຫົວໜ້າຄະນະສະເພາະກິດກະຊວງການຕ່າງປະເທດ

ທອງສະຫວັນ ພົມວິຫານ